# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 27 ສິງຫາ 2005 (08-27-2006)

---

## ຂຍາຍໂອກາດທີ່ພຣະເຈົ້າຊົງປະທານໃຫ້

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ( ກິຈການ 19:1-5,810,23-28 )

**ພຣະຄັມພີແຫ່ງຄວາມຈິງ:** ພຣະເຈົ້າຊົງຕ້ອງການທີ່ຈະໃຊ້ຜູ້ທີ່ເຊື່ອໃຫ້ອອກໄປເປັນຕົວແທນໃນການປ່ຽນແປງ ແປງສະພາບຂອງຄົນແລະຮີດຄອງປະເພນີທີ່ເຂົາຖືກັນຢູ່.

**ຜົນສະທ້ອນຕໍ່ຊີວິດ:** * ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍໃຫ້ເຂົ້າໃຈເຖິງວິທີການທີ່ໂປໂລໄດ້ໃຊ້ການໜູນໃຈແລະໂອກາດແລະໃຊ້ເຂົາເຫລົ່ານັ້ນເພື່ອເປັນທີ່ຖວາຍກຽດແກ່ພຣະເຈົ້າ; ແລະ

* ເພື່ອຈະໜູນໃຊ້ຂອງພຣະຣາຊທານທີ່ພຣະເຈົ້າໄດ້ຊົງປະທານໃຫ້ແລ້ວນັ້ນເພື່ອທີ່ຈະມີການໃຫ້ຄຳສັນຍາຄືຈະສວຍໂອກາດເຮັດທຸກສິ່ງດ້ວຍການຊ່ວຍເຫລືອຂອງພຣະເຈົ້າ.

## ສຶກສາພຣະຄັມພີ

### ຂ້າພະເຈົ້າຈະເຮັດຢ່າງໃດການປະກາດຂອງຂ້າພະເຈົ້າໃຫ້ໄດ້ຮັບຜົນທີ່ມີຄວາມແຫລມຄົມ?

ໃນໜວ່າງລະຍະໃກ້ໆ ທີ່ຜ່ານມານີ້, ທາງໂບດໄດ້ປະກາດຫາຜູ້ອາສາສມັກທີ່ຈະອອກໄປເປັນຜູ້ປະກາດລະຍະສັ້ນໆ ທີ່ປະເທດຢູຣິເຄນ, ມີສະມາຊິກຂອງໂບດໄດ້ມີການສເນີຕອບທັງໝົດເກົ້າຄົນຄືຈະຕ້ອງໃຊ້ເວເວລາທັງໝົດ ແປດວັນໃນປະເທດທີ່ຢູ່ພາກຕາເວັນອອກຂອງຢູໂຣບໂດຍການເຜີຍແຜ່ປະກາດໃຫ້ແກ່ເດັກກຳພ້າແລະໂບດນ້ອຍ ໆທີ່ຢູ່ໃນຂອບເຂດນັ້ນ. ພວກເຂົາເຈົ້າໄດ້ກັບຄືນມາແລະມີເຣື່ອງທີ່ໜ້າອັສຈັນທີ່ພຣະເຈົ້າມີທິດທາງຂອງພຣະອົງໃນການໃຊ້ໃຫ້ເກີດມີຄວາມແຕກຕ່າງເກີດຂຶ້ນໃນຄົນອື່ນ ແລະອຸປນິດສັຍສ່ວນຕົວຂອງເຂົາເຈົ້ານຳດ້ວຍ. ນີ້ແມ່ນກອງປະກາດທີ່ພວກຜູ້ນຳເຫລົ່ານີ້ໄດ້ສວຍໂອກາດແລະເວລານີ້ເພື່ອມີຄວາມພ້ອມທີ່ຈະໃຫ້ພຣະເຈົ້າໄດ້ໃຊ້ໃຫ້ພວກເຂົາໄດ້ອອກໄປທຳພາຣະກິດໃຫ້ແກ່ພຣະອົງ. ທ່ານເຄມີຄວາມສົນໃຈທີ່ຈະເປີດໂອກາດໃນທຸກວັນເວລາທີ່ມີເພື່ອທີ່ຈະຮັບໃຊ້ພຣະເຢຊູບໍ່? ທ່ານຍິນຍອມທີ່ຈະເປັນຂ້ອຍໃຊ້ໃຫ້ແກ່ພຣະອົງຕາມທີ່ພຣະອົງຈະຊົງເຫັນວ່າເໝາະສົມສຳລັບທ່ານຫລືບໍ່?

### 1. ການຕິດຕໍ່ພົວພັນທີ່ແຈ່ມແຈ້ງ: ( ກຈກ. 19: 1-5 )

ຜູ້ທີ່ຕິດຕາມພຣະເຢຊູທັງໝົດແມ່ນຖືກເອີ້ນມາໃຫ້ເປັນພະຍານເພື່ອພຣະອົງວ່າເປັນຜູ້ໃດແລະແມ່ນຫຍັງທີ່ພຣະອົງໄດ້ຊົງຈັດແຈງໄວ້ສຳລັບຜູ້ທີ່ເຊື່ອທຸກຄົນ. ຜູ້ທີ່ເປັນພະຍານທີ່ເກີດຜົນຈະຕ້ອງມີຄວາມເຂົ້າໃຈຢ່າງເລິກເຊິ່ງລະອຽດຂອງຄວາມຈິງທີ່ມີຢູ່ໃນພຣະຄັມພີ.

ເມືອງເອຟາໂຊເປັນເມືອງໃຫຍ່ເມືອງນຶ່ງໃນເຂດແຂວງໂຣມໃນພາກພື້ນເອເຊັຍ ( ປະເທດເຕີກີ ). ໃນການອອກທ່ອງທ່ຽວໄປປະກາດຂ່າວປະເສີດໃນຄັ້ງທີສອງຂອງເພິ່ນ (ບາງທີ ສັຕວັດທີ 49-52, ໂປໂລໄດ້ແວ່ພັກເຊົາຢູ່ທີ່ເມືອງເອເຟໂຊເປັນລະຍະພຽງສັ້ນໆ ແລະຫວັງວ່າຈະໄດ້ກັບມາແວ່ຢ້ຽມຢາມອີກເທື່ອນຶ່ງ ( 18:19-21 ). ໃນການໄປຄັ້ງທີສອງນີ້ໂປໂລໄດ້ພົບວ່າມີກຸ່ມພວກສາວົກຄືຜູ້ທີ່ມີການຮັບຕອບສນອງຕໍ່ການປະກາດຂອງໂຢຮັນແບບຕິສແລະຍັງເປັນຜູ້ເຮັດພິທີຮັບສົນບັບຕິສະມາໃຫ້ຜູ້ທີ່ຍອມກັບໃຈໃໝ່. ເມື່ອໂປໂລໄດ້ຕັ້ງຄຳຖາມພວກເຂົາກ່ຽວກັບຄວາມເຂົ້າໃຈໃນຂ່າວປະເສີດ, ເພິ່ນກໍໄດ້ຄົ້ນພົບວ່າພວກເຂົາຍັງຕ້ອງການຄວາມຮູ້ເພີ່ມເຕີມໃນເຣື່ອງນີ້. ພວກເຂົາກໍໄດ້ມີການປ່ຽນແປງໃໝ່ເພື່ອທີ່ຈະໄດ້ເປັນຜູ້ນຳທີ່

ສົມບູນເພື່ອການອອກໄປເປັນຜູ້ປະກາດຂ່າວປະເສີດຂອງພຣະເຢຊູແລະຂອງ**ພຣະວິນຍານບໍຣິສຸດ**ດ້ວຍ.

ໂປໂລໄດ້ອະທິບາຍເຖິງປະກາດຂອງໂຢຮັນຄື **ການຖິ້ມໃຈເກົ່າເອົາໃຈໃໝ່ແລະນັ້ນແຫລະຄົນທັງຫລາຍ...ຄວນຈະເຊື່ອຜູ້ທີ່ມາຕາມຫລັງເພິ່ນ, ແລະກໍມີຢູ່ໃນພຣະເຢຊູ.** ແລະບໍ່ມີສິ່ງທີ່ຈະສົງໃສໄດ້ເລີຍ, ໂປໂລໄດ້ເວົ້າຕໍ່ເຖິງເຣື່ອງທີ່ພວກເຂົາມີຄວາມຂ້ອງໃຈ ຄືເຣື່ອງທີ່ພຣະບິດາສັນຍາວ່າຈະໃຫ້ພຣະວິນຍານບໍຣິສຸດຢູ່ນຳທຸກໆ ຄົນທີ່ເຊື່ອໃນພຣະເຢຊູ. ຫລັງຈາກທີ່ພວກເຂົາໄດ້ຍິນການປະກາດດັ່ງນັ້ນສິ້ນສຸດລົງ, ພວກເຂົາເຫລົ່ານັ້ນກໍໄດ້ພາກັນຕັດສິນໃຈຮັບສິນບັບຕິສະມາໃຫມ່ອີກເທື່ອນຶ່ງ-ໃນເທື່ອນີ້ແມ່ນໃນພຣະນາມຂອງພຣະຜູ້ເປັນເຈົ້າເຢຊູ.

ຕາມລະບຽບການ, ສາວົກເຫລົ່ານີ້ມີຄວາມເຊື່ອໃນການຖິ້ມໃຈເກົ່າເອົາໃຈໃຫມ່; ແລະດຽວນີ້ເຂົາກໍມີຄວາມເຊື່ອໃນການຟື້ນຄືນພຣະຊົນຂອງອົງພຣະຜູ້ເປັນເຈົ້າ. ຕິດຕາມດ້ວຍການຮັບສິນບັບຕິສະມາ, ໂປໂລ " ໄດ້ວາງມືໃສ່ເທິງພວກເຂົາ " ແລະພຣະວິນຍານບໍຣິສຸດກໍສະເດັດມາເທິງເຂົາທຸກຄົນ. ຕໍ່ໄປກໍເປັນການຮັບປະກັນເຣື່ອງຈິດວິນຍານທີ່ໄດ້ຮັບບັບຕິສະມາແລ້ວກໍເລີ້ມເຮັດພາຣະກິດຂອງພຣະອົງຄືພວກເຂົາຕັ້ງຕົ້ນເວົ້າພາສາແປກໆ ແລະທຳນວາຍໄດ້ ( 19:6 ).

ໂປໂລໄດ້ຍົກຕົວຢ່າງທີ່ສຳຄັນໃນການຕຽມຕົວໃຫ້ດີທີ່ສຸດໃນການທີ່ຈະເປັນພະຍານ. ທີແລກ, ພວກເຮົາຈະຕ້ອງຕັ້ງໃຈສຶກສາຄົ້ນຄວ້າພຣະຄັມພີໃຫ້ເຂົ້າໃຈຢ່າງເລິກເຊິ່ງໃນເຣື່ອງຂ່າວປະເສີດ. ບໍ່ຕ້ອງໃຫ້ມີການຕັດສັ້ນເຂົ້າຫລີຫລີກທາງອອກຈາກຄວາມຈິງໃນການປ່ຽນແປງຊີວິດຂອງຄຣິສຕຽນ. ຂັ້ນຕອນ, ໃນການຮຽນພຣະຄຳຂອງພຣະເຈົ້າທີ່ເລິກແລບແລະສັກສິດນັ້ນແມ່ນເອົາຄວາມຈິງແທ້ມາອ້າງອີງເປັນຫລັກຖານທີ່ແນ່ນອນ. ເຖິງປານນັ້ນ, ກໍຍັງມີຫລາຍຄົນບໍ່ເຂົ້າໃຈຄວາມຫມາຍແລະຈຸດປະສົງຂອງພຣະຄັມພີ. ບາງທີພວກເຂົາອາດຈະໄດ້ຍິນ ແລະໄດ້ສັມຜັດກັບຜູ້ສອນປອມຫລືຂ່າວຄາວທີ່ບິດເບືອນຈາກຄວາມຈິງ. ບາງທີພວກເຮົາເອງກໍອາດຈະບໍ່ຮູ້ຄຳຕອບທັງຫມົດໃນຄຳຖາມຂອງເຂົາ, ພວກເຮົາຄວນຈະຊອກຫາຄົ້ນຄວ້າຕຽມພ້ອມໃນທຸກທາງເທົ່າທີ່ຈະເປັນໄປໄດ້ທີ່ຈະມີການພົວພັນຕິດຕໍ່ເຣື່ອງຄວາມຈິງຢ່າງລະອຽດ.

**໒. <u>ຈົ່ງຕຽມພ້ອມຢູ່ສເມີ :</u>** ( ກຈກ. 19: 8-10 )

**ໂຮງທັມ**ກໍຄືບ່ອນທີ່ພວກຄົນຍິວເຕົ້າໂຮມກັນໃນວັນສະບາໂຕເພື່ອນະມັສການ, ໄຫວ້ວອນ, ແລະຟັງການອ່ານໃຫ້ຟັງ ( ພຣະຄັມພີເດີມ ). ໃນຂະນະທີ່ໂປໂລໄດ້ເດີນທາງຈາກເມືອງນຶ່ງຫາເມືອງນຶ່ງໃນການອອກໄປປະກາດ, ເພິ່ນໄດ້ເລືອກໃຊ້ໂຮງທັມເພື່ອເປັນສະຖານທີ່ແບ່ງປັນຂ່າວປະເສີດ ( ມທ. 13:5, 14; 14:1; 18:4 ). ຕັ້ງເດີມມາແລ້ວພວກຄົນຍິວທີ່ອາສັຍຢູ່ໃນເມືອງເອເຟໂຊນັ້ນກໍໄດ້ນັບຖືພຣະເຈົ້າອົງດຽວອົງທ່ຽງແທ້ຢູ່ແລ້ວແລະພວກເຂົາກໍລໍຄອຍການສະເດັດມາຂອງພຣະເມສີອາຢູ່ສເມີ, ພວກເຂົາກໍຕຽມດີພ້ອມແລ້ວທີ່ຈະຟັງກ່ຽວກັບເຣື່ອງຂອງພຣະເຢຊູ.

ໃນຄັ້ງແລກທີ່ເພິ່ນໄດ້ໄປຢ້ຽມຢາມເມືອງເອເຟໂຊ, " ໂປໂລໄດ້ເຂົ້າໄປຮ່ວມໃນໂຮງທັມແລະໄດ້ມີການຫມູນໃຈແລະໂຈດຖຽງກັນກັບພວກຍິວ " ( 18:19 ). ອີກທັງພວກເຂົາກໍໄດ້ຂໍໃຫ້ຢູ່ຕໍ່ໄປເພິ່ນກໍບໍ່ຍອມ, ແຕ່ໄດ້ລາເຂົາໄປໂດຍສັນຍາວ່າ " ຖ້າພຣະເຈົ້າຊົງເຫັນຊອບ " ທ່ານຈະກັບມາອີກ ( ຂໍ້ 21 )ໆ ດັ່ງນັ້ນ, ເມື່ອເພິ່ນກັບມາສັ່ງສອນພວກເຂົາອີກໃນເທື່ອລຸນ ເພິ່ນກໍບໍ່ໄດ້ເປັນຄົນແປກຫນ້າສຳລັບພວກເຂົາທີ່ມາຮ່ວມຊຸມນຸມກັນຢູ່ທີ່ນັ້ນ. ໂປໂລມີຄວາມພ້ອມຢູ່ສເມີເຫມືອນກັບເຄື່ອງດົນຕຣີສຳລັບພຣະວິນຍານບໍຣິສຸດທີ່ຈະເປີດເຜີຍໃຫ້ຮູ້ເຖິງຄວາມຈິງທີ່ກ່ຽວຂ້ອງໃນເຣື່ອງ "**ຣາຊອານາຈັກສວັນຂອງພຣະເຈົ້າ,** ແຕ່ພວກເຂົາຕ້ອງການຄວາມເຂົ້າໃຈເລິກເຊິ່ງໃນການຕຽມຕົວ ເພື່ອເຈົ້າຊີວິດອົງທີ່ຈະມາເປີດທາງໃຫ້ຜູ້ທີ່ຈະເດີນທາງເຂົ້າໄປໃນ

ທີ່ນັ້ນວ່າຈະຕ້ອງຕຽມພ້ອມແນວໃດແດ່ຈຶ່ງຈະເຖິງຈຸດໝາຍນັ້ນ. ໂປໂລຮູ້ວ່າການຢ້ຽມຢາມຄັ້ງນີ້ເປັນເວລາພຽງສັ້ນໆ ແຕ່ກໍບໍ່ໄດ້ເຮັດໃຫ້ມີອຸປສັກສຳລັບການຈັດຕັ້ງພວກພີ່ນ້ອງທີ່ມີຄວາມເຊື່ອເຫລົ່ານີ້.

ເພິ່ນໄດ້ເຂົ້າໄປກ່າວສົນທະນາໃນໂຮງທັມດ້ວຍ**ໃຈກ້າ**ໃນ**ລະຫວ່າງສາມເດືອນ**. ຄວາມໝາຍດັ້ງເດີມຂອງຄຳວ່າ**ໃຈກ້າ**ຄື, "ເວົ້າດ້ວຍຄວາມໝັ້ນໃຈ." ອັຄສາວົກຮູ້ເຖິງການມີປະສົບປະການຂອງຕົນເອງຄືການປະກາດຂອງເພິ່ນໄດ້ແມ່ນເພິ່ນສອນເຣື່ອງຄວາມຈິງ. ໂປໂລຍັງໄດ້ບອກເລົ່າຕອນທີ່ເພິ່ນເຄີຍໄປທີ່ໂຮງທັມເພື່ອຊອກຈັບແລະຈະມັດພາຄົນຄຣິສຕຽນມາຍັງກຸງເຢຣູຊາເລັມ ( ກຈກ. 9: 1-2 ). ແຕ່ຫລັງຈາກໄດ້ມີເຫດການທີ່ເກີດຂຶ້ນກັບເພິ່ນທີ່ມີສ່ວນກ່ຽວຂ້ອງກັບພຣະເຢຊູແລ້ວ, ໂປໂລກໍບໍ່ໄດ້ຄືເກົ່າອີກຕໍ່ໄປ; ປ່ຽນຈາກຊອກຈັບແລະຂົ່ມເຫງຄົນຄຣິສຕຽນກາຍເປັນຜູ້ເທສນາສັ່ງສອນແທນ.

ປາກົດວ່າມີຄົນຈຳນວນນຶ່ງທີ່ສາລາໂຮງທັມໃນເມືອງເອເຟໂຊໄດ້ເຊື່ອໃນສິ່ງທີ່ໂປໂລໄດ້ສັ່ງສອນ, ແຕ່ຄົນອື່ນໆ **ໄດ້ກາຍເປັນຄົນຫົວແຂງແລະບໍ່ຕ້ອງການທີ່ຈະເຊື່ອ**. ແນ່ນອນ, **ພວກທີ່ບໍ່ຍອມເຊື່ອແມ່ນໄດ້ກາຍເປັນແລະກ່າວຄຳຫຍາບຊ້າເຣື່ອງທາງນັ້ນຕໍ່ໜ້າຄົນທັງຫລາຍ**. ມີຫລາຍຄັ້ງໄດ້ບັນທຶກໃນພຣະຄັມພີ ກິຈການ ທີ່ໄດ້ກ່າວເຖິງການດຳຣົງຊີວິດຂອງຄົນພວກນັ້ນໄດ້ເລືອກທີ່ຈະເຊື່ອໃນພຣະເຢຊູແລະຕິດຕາມການສິດສອນຂອງເພິ່ນ ( 9:2, 19:9, 23; 24:22 ). ແມ່ນທີ່ຈະເຮັດໃຫ້ເກີດມີຄວາມຫຍຸ້ງຍາກ, ໂປໂລໄດ້ຖອນຕົວອອກຈາກເມືອງນັ້ນໄປຈາກເຂົາ. ເຖິງຢ່າງໃດໂປໂລກໍບໍ່ໄດ້ຍອມລົດລະ; ເພິ່ນໄດ້ພົບສະຖານທີ່ໃຫມ່ແລະໄດ້ດຳເນີນການເປັນພະຍານເພື່ອພຣະເຈົ້າຕາມໂອກາດທີ່ມີ.

ການນີ້ມີຢູ່ເປັນ**ສອງ**ປີໂປໂລ**ຈຶ່ງແຍກອອກຈາກເຂົາແລະຄັດເອົາລູກສິດໄປນຳ....ແລະທ່ານໄດ້ໂຕ້ຖຽງຢູ່ໃນຫ້ອງປະຊຸມຂອງທ່ານຕີຣາໂນທຸກໆ ວັນ**. ບໍ່ໄດ້ກ່າວເຖິງລາຍລະອຽດວ່າຄົນຜູ້ນີ້ແມ່ນຜູ້ໃດ; ທ່ານອາດຈະເປັນອາຈານສອນຈິຕວິທຍາຫລືອາດຈະເປັນເຈົ້າຂອງສະຖານທີ່ສຳລັບປະຊຸມນີ້. ເຖິງຢ່າງໃດ, ໃນລະຫວ່າງຫລາຍປີນີ້, ໂປໂລໄດ້ພົບປະດ້ວຍຄວາມເຊື່ອອັນໝັ້ນຄົງທຸກໆ ວັນ ດ້ວຍມີຫລາຍຄົນສົນໃຈໃນການໂຕ້ຖຽງໃນເຣື່ອງການດຳຣົງຊີວິດຂອງຄຣິສຕຽນ. ໂປໂລບໍ່ໄດ້ສອນແຕ່ສະເພາະຕໍ່ໜ້າປວງຊົນເທົ່ານັ້ນ. ໃນເວລາຕໍ່ມາເພິ່ນກໍໄດ້ແກ້ໄຂກັບພວກເຖົ້າແກ່ທີ່ຢູ່ໃນວິຫານທີ່ເມືອງເອເຟໂຊ, ເຮົາບໍ່ໄດ້ທໍ້ຖອຍຈາກການປະກາດແລະສັ່ງສອນພວກທ່ານໃນທີ່ປະຊຸມແລະຕາມບ້ານເຮືອນ" ( 2::20 ). ການປະກາດຂອງເພິ່ນແມ່ນເປັນສິ່ງມະຫັສຈັນທີ່ມີຜົນໃຫ້ໃນທົ່ວແຂວງເອເຊັຍ, ທັງຄົນຢິວແລະພວກຄົນກຣີກ, ໄດ້ຍິນເຣື່ອງຂອງພຣະຜູ້ເປັນເຈົ້າ.

ໂປໂລບໍ່ໄດ້ກ່າວສິ່ງໃດໃນເຣື່ອງສ່ວນຕົວເອງກັບບຸກຄົນໃດໃນສະຖານທີ່ໃຫຍ່ໂຕ, ແຕ່ໄດ້ສັ່ງສອນແລະໃຫ້ຄຳແນະນຳແກ່ຄົນອື່ນ, ເພື່ອຄົນຜູ້ນັ້ນຈະໄດ້ໄປສັ່ງສອນຄົນອື່ນໆ ອີກຕໍ່ ໆ ກັນໄປຕາມຂັ້ນຕອນ. ໃນການອອກໄປເປັນຜູ້ປະກາດຂອງເພື່ອແມ່ນເຮັດໄປຕາມຄຳສັ່ງຂອງພຣະເຢຊູຄືຈົ່ງສ້າງສາວົກແລະສາວົກສ້າງສາວົກຕໍ່ໆ ໄປ ( ມທ. 18:19-20 ).

ສິ່ງສຳຄັນທີ່ສຸດໃນບົດຮຽນບົດນີ້ທີ່ມີໄວ້ໃຫ້ພວກເຮົາຄວນຈະມີເວລາພ້ອມຢູ່ສເມີບໍ່ວ່າເວລາໃດກໍຕາມເພື່ອທີ່ຈະຊ່ວຍເຫລືອຜູ້ອື່ນໄດ້ເຂົ້າໃຈເຖິງຂ່າວເຣື່ອງຂອງຄຣິສຕຽນ, ການເກີດໃຫມ່ແລະເລີ້ມຕົ້ນໃນການບຳລຸງລ້ຽງຈິດວິນຍານທີ່ເປັນລະຍະເວລານຶ່ງໃນການຈະເຣີນເຕີບໂຕທາງດ້ານຈິດວິນຍານ, ແລະຂັ້ນຕອນເຫລົ່ານີ້ກໍແມ່ນຕ້ອງການເວລາຫລາຍປີໃນການກໍ່ຮ່າງສ້າງຕົວ.

3. <u>ຢ່າໃຫ້ມີອຸປສັກອັນໃດສາມາດກີດຂວາງແລະເຮັດໃຫ້ທ່ານທໍ້ແທ້ໃຈ:</u> ( ກິຈການ 19:23-28)

ລະຍະເວລາທີ່ໂປໂລປະກາດຢູ່ທີ່ເມືອງເອເຟໂຊໄດ້ມີເຫດການຫວຸ້ນວາຍອັນໃຫຍ່ກ່ຽວກັບເຣື່ອງ

ທາງນັ້ນ.    ການປະກາດຂອງເພິ່ນແມ່ນໄດ້ຮັບຜົນເຕັມສ່ວນທີ່ສຸດຈົນເປັນເຫດໃຫ້ມີຫລາຍຄົນໄດ້ຢຸດເຊົາຊື້ເຄື່ອງເງິນຮູບປັ້ນຂອງພະມະຫາອາເຕມາ, ຊຶ່ງເປັນຮູບປັ້ນພຣະເກົ່າແກ່ໃນສມັຍກຣີກທີ່ພວກເຂົາມີຄວາມເຊື່ອວ່າເປັນຜູ້ມີຣິດອຳນາດຢູ່ເຫນືອຄວາມຮັ່ງມີ, ຍ້ອນເຫດຜົນທີ່ເຫດການຄັ້ງນີ້ກະທົບກະເທືອນຕໍ່ລາຍໄດ້ຂອງພວກເຂົາ, **ຈຶ່ງເປັນເຫດໃຫ້ເກີດຄວາມຫວຸ້ນວາຍ.**

ມີຊາຍຄົນນຶ່ງຊື່ເດເມທີໂອ,  **ເປັນຊ່າງຕີເງິນຮູປພັນຕ່າງໆ ແລະຂັດເຄື່ອງເງິນໃຫ້ມີສີເຫລື້ອມເປັນເງົາງາມ.**  ຊຶ່ງເປັນເຫດໃຫ້ພວກຊ່າງຕີເງິນດ້ວຍກັນໄດ້ມີງານຫລວງຫລາຍແລະເພາະໂປໂລເປັນສາເຫດເຮັດໃຫ້ພວກເຂົາຂາດລາຍໄດ້ໄປ.  ລາວເວົ້າວ່າໂປໂລ**ຜູ້ນີ້ໄດ້ຊັກຊວນຄົນຫລາຍສົມຄວນໃຫ້ຫລົງໄປ.** ເດເມທີໂອໄດ້ຫາເລື້ອງໃສ່ໂປໂລວ່າພະທີ່ສ້າງຂື້ນດ້ວຍມືມະນຸດນັ້ນບໍ່ແມ່ນພຣະເຈົ້າແທ້ໆ!    ພວກເຮົາຄວນຈະເຂົ້າໃຈໃຫ້ເລິກເຊິ່ງໃນຄວາມຈິງຂອງເຣື່ອງນີ້  ເພາະອາດຈະເປັນສາເຫດເຮັດໃຫ້ພວກເຂົາໄດ້ຂາຍຮູບປັ້ນໂຄຣົບເຫລົ່ານີ້ຊື່ ໆ.

ອີກທັງເດເມທີໂອເວົ້າວ່າ ພຣະວິຫານກັບສະຖານທີ່ນະມັສການຂອງພຣະມະຫາອາເຕມາຈະຖືກຫມິ່ນປມາດເຫມືອນກັນ, ຄວາມຈິງແລ້ວຄວາມສົນໃຈຂອງລາວແມ່ນພຽງແຕ່ການຫາເງິນເທົ່ານັ້ນ:  ລາວເລີ້ມຕົ້ນດ້ວຍ " **ເປັນຫນ້າຢ້ານວາອາຊີບຂອງພວກເຮົາຈະເສັຍຊື່ສຽງ.**" ຄວາມຮັ່ງມີຂອງລາວເອງແມ່ນເປັນພຣະເຈົ້າແທ້ຂອງລາວ.     ຄົນທັງຫລາຍກໍໄດ້ຮວມກັນເຮັດໃຫ້ເກີດການໂກລາຫົນທັງມີການຮ້ອງດ້ວຍຄວາມຄຽດແຄ້ນຈົນມີຄົນໄດ້ຖືກຈັບດຶງລາກເພື່ອນຮ່ວມທາງຂອງໂປໂລເອົາເຂົ້າໄປໃນໂຮງລະຄອນ. ໃນທີ່ສຸດ, ກໍມີເລຂາທິການເທສບານຄືທ່ານອາເລັກຊັນໂດໄດ້ອອກມາມາກ່າວແກ້ແທນຕໍ່ຫນ້າປະຊາຊົນຢ່າງມີເຫດຜົນເຫດການນັ້ນຈຶ່ງສງົບລົງ.

ກໍເຫມືອນກັນກັບໂປໂລທີ່ຢູ່ໃນສະພາບແວດລ້ອມຂອງປະເພນີແລະໄດ້ກາຍເປັນນັບຖືຮູບເຄົາຣົບໃນທີ່ສຸດ.  ພີ່ນ້ອງຄຣິສຕຽນຂນານແທ້ແມ່ນຍັງຕັ້ງຫມັ້ນຄົງຢູ່ໃນ " ທາງນັ້ນ " ມີພຽງຂະບວນການໃຕ້ດິນທີ່ຍັງຄົງເປັນພື້ນຖານທີ່ກຳເນີດຂອງພວກເຮົາທຸກຊົນຊາດ.  ເມື່ອພຣະຄັມພີດັ້ງເດີມໄດ້ມີຄຳສັ່ງໃຫມ່ໃຫ້ມີການເລືອກ, ພວກເຮົາກໍຫວັງວ່າຈະມີຄວາມຄິດທີ່ຫນັກແຫນ້ນໃນການທີ່ຈະຢູ່ໃນຝ່າຍກົງກັນຂ້າມ.  ຕົວຢ່າງທີ່ໄດ້ເກີດຂື້ນແລ້ວທີ່ເປັນຄວາມຈິງໃນສັງຄົມຄືການຕໍ່ຕ້ານການທຳແທ້ງ, ການມີເພດສຳພັນກັບເພດດຽວກັນແລະການແຕ່ງງານກັບເພດດຽວກັນ.  ຜູ້ທີ່ຕິດຕາມພຣະເຢຊູຈະບໍ່ເປັນທີ່ນິຍົມຊົມຊອບໃນໂລກນີ້ທີ່ຕົກຢູ່ໃນຄວາມຄວບຄຸມຂອງຊາຕານ.

ແຕ່ຈົ່ງສັງເກດວ່າໂປໂລໄດ້ມີປະຕິກິຣິຍາຕອບກັບເຫດການເຫລົ່ານີ້ທີ່ໄດ້ເກີດຂື້ນຢູ່ໂຮງທັມແລະໂຮງລະຄອນ.     ເພິ່ນໄດ້ປະຕິເສດທີ່ຈະບິດເບືອນໃນການປະກາດເຣື່ອງຄວາມຈິງຂອງການແບ່ງປັນຂ່າວປະເສີດ.    ເມື່ອມີຄົນຫລາຍຄົນໃນທີ່ປະຊຸມແລະທີ່ມາຟັງມີຄວາມສົນໃຈ.    ເພິ່ນກໍພຽງເຮັດວິທີງ່າຍໆ ຄືພາພວກຜູ້ທີ່ເຊື່ອເຫລົ່ານັ້ນຍ້າຍໄປທີ່ອື່ນແລະບໍ່ຍອມທີ່ຈະໃຫ້ຕົນເອງຖືກຈັບໃນຂໍ້ຫາກໍຣະນີໃດໆ  ໃນເຣື່ອງທີ່ໄຮ້ປໂຍດ.    ເຫມືອນນັກປາດ,  ພວກເຮົາກໍໄດ້ສຶກສາຮຽນຮູ້ທີ່ຈະຫາວິທີນຳພາຕົວເອງໃຫ້ຫລີກຫນີຈາກເຫດການຫວຸ້ນວາຍຈາກການທົດລອງດີຂອງເຮົາເອງ.    ຍັງເທື່ອ, ເຫມືອນກັບໂປໂລ, ຍ້ອນພຣະເຈົ້າຊົງຊ່ອຍ, ພວກເຮົາຈຶ່ງຫລີກຫນີຈາກເຫດການເລວຮ້າຍນັ້ນໄດ້.